France – 05 Mai 2006

ມິຕພາບທະຫານລາວ ກ່າວວ່າ ອະນາຄົດຂອງລາວ ຄື

# ຄວາມເປັນລາວ ທີ່ຍືນຍາວ

ສະບັບທີ ໓

## ນາຍທະຫານ ທີ່ຖືກຂ້າຕາຍຢູ່ສູນສັມມາ

ຍ້ອນ ຮັກຄວາມເປັນລາວ, ຮັກສັນຕິພາບ ແລະ ຮັກຄວາມຖືກຕ້ອງປອງດອງຊາດ ຣະຫວ່າງລາວຕໍ່ລາວ, ນາຍແລະພົນທະຫານທີ່ມີຊື່ຢູ່ຂ້າງລຸ່ມນີ້ ໄດ້ຖິ້ມຊີວິດຂອງຕົນໄວ້ທີ່ສູນສັມມາ ແທນທີ່ຈະຕາຍ ຢູ່ສນາມຣະພູມສນາມຣົບ ເໝືອນກັນກັບທະຫານທົ່ວໄປໃນໂລກ. ທະຫານຫຼາຍຄົນ ໄດ້ຈາກຄອບຄົວໄປຢ່າງບໍ່ໄດ້ສັ່ງລູກສັ່ງເມັຽ ແມ້ແຕ່ພຽງໜ້ອຍດຽວ ແລະ ໄດ້ປະປ່ອຍໃຫ້ລູກທຸກຄົນ ໃນຄອບຄົວກາຍເປັນກຳພ້າພໍ່ກຳພ້າແມ່. ນີ້ຄືຜົນງານຂອງສັນຍາກ່ຽວກັບການຖືກຕ້ອງປອງດອງຊາດ.

ວັນທີ ໒໓ ມີນາ ນີ້, ພວກຂ້າພະເຈົ້າ ໃນນາມຄົນລາວ ຊຶ່ງມີ ຍາຕິພີ່ນ້ອງພ້ອມດ້ວຍລູກເຕົ້າ ຂໍກົນທານ ເພື່ອອຸທິດບຸນກຸສົນ ແດ່ດວງວິນຍານຂອງທຸກໆທ່ານ ທີ່ໄດ້ສລະຊີວິດແລະເລືອດເນື້ອໃນການຕໍ່ສູ້ສັດຕຣູຂອງປະເທດຊາດ ເພື່ອໃຫ້ຄົນລາວທຸກຄົນໄດ້ຢູ່ ໃນຄວາມຕລອດປອດໄພແລະຢູ່ໃນຄວາມພາກພູມໃຈຈົນມາເຖິງທຸກວັນນີ້.

ຂໍໃຫ້ປະເທດລາວ ພ້ອມດ້ວຍດິນດອນ ຕ່ອນຫຍ້າທຸກໆຕອນ ຈົງຍັງຄົງເຫຼືອຢູ່ເປັນຂອງຄົນລາວຕລອດກາລະນານເທີນ. ຄົນລາວຄວນມີສະຕິ.

- ພົນຕຣີ ຜາສຸກ ສໍຣາຊພັກ (ສູນສົບຮາວ)
- ທ່ານ ພັນເອກ ບຸນທົດ ຫຼຽວານິສວົງສ໌
- ນາຍພົນໂທ ບຸນປອນ ມາກເທພຣັກ, ຜູ້ບັນຊາການທະຫານສູງສຸດແຫ່ງຊາດ, ຖືກຂ້າ ຢ່າງໂຫດຮ້າຍແສນທໍຣະມານ ຢູ່ສູນ ສົບຮາວ
- ພົນຈັຕວາ ໝູເພັຊຣ໌ ດາວເຮືອງ (ສູນສົບຮາວ)
- ທ່ານ ພັນເອກ ສົມຈັນ ບຸນພິໄສ
- ທ່ານ ນາຍພົນຕຣີ ອ້ວນ ຣາທິກຸນ

ກະຣຸນາສົ່ງຊື່ຜູ້ຖືກຂ້າຕາຍຢູ່ສູນສັມມາໃຫ້ດ້ວຍ

**ຮູ້ແລ້ວເຖົ້າ ເຂົ້າໃຈແລ້ວຕາຍ**

## ມີຂ້ານ້ອຍ - ມີພ້ອງນາຍ - ມີຊາຍເພື່ອນ

ຄວາມເປັນລາວຈະຍືນຍາວໄດ້ ກໍຕໍ່ໃນເມື່ອຄົນລາວທັງຫຼາຍ ໄດ້ຮັບການສຶກສາຣະດັບສູງ ເພື່ອໃຫ້ມີຄວາມສາມາດວິຈັຍໄດ້ (Analyser), ເພື່ອໃຫ້ເຂົ້າໃຈວ່າໃຜເປັນລາວ ໃຜເປັນແກວແລະໃຜມີຫົວເປັນແກວມີແອວເປັນລາວ. ຖ້າຜູ້ໃດຍາກເຫັນລາວຈະເຣີນ ຜູ້ນັ້ນຕ້ອງບໍ່ຍອມຮັບແກວມາເປັນນາຍແລະມາເບິ່ງການຢູ່ໃນປະເທດແຫ່ງຕົນ. ແນ່ນອນວ່າ, ຜູ່ໃດມີສາຍເລືອດລາວແທ້ ຜູ້ນັ້ນຈະຕ້ອງ ພະຍາຍາມສຸດຄວາມສາມາດ ຊ່ວຍເຫຼືອລາວ ແລະ ເຮັດໃຫ້ແກວໜີອອກຈາກລາວໃນເວລາອັນເໝາະສົມຕາມໂອກາດ. ແຕ່ວ່າທ່ານຕ້ອງຄຳນຶງເຖິງອັນຕະຣາຍອັນນຶ່ງ ທີ່ມັນຈະເກີດເປັນໄພຕໍ່ທ່ານຕາມພາຍຫຼັງຄືຕ້ອງໃຫ້ຮູ້ວ່າ ໃຜເປັນລູກນ້ອງແລະໃຜເປັນລູກແກວ ເພາະວ່າ ຫຼັງຈາກພວກ ລາວແກວຈັບກຸມເອົາຄົນລາວໃນປີ ໑໙໗໕ ໄປຂ້າຖິ້ມຢູ່ສູນສັມມາ ພວກເຂົາກໍໄດ້ຕັ້ງຄົນແກວທີ່ປາກລາວໄດ້ເຂົ້າສລັບຊັບຊ້ອນຄົນລາວທັນທີ. ຄົນແກວທີ່ບໍ່ຍອມເປັນລາວ ໃນອະດີດໄດ້ກາຍເປັນນາຍທັນໃດ ດັ່ງອະດີດເອກອັກຄະຣາຊທູດລາວທີ່ໂປໂລຍ. ໓໐ ປີຜ່ານມາ, ລູກແກວເປັນໃຫຍ່

| | |
|---|---|
| ໑ | • ຄວາມເປັນລາວຄື ບໍ່ຂ້ານ້ອງ ບໍ່ພ້ອງ |
| ໒ | • ຄວາມປອດພັຍ • ຂ້າເຈົ້າເອົາຂອງ |
| ໓ | • ຄຳສີ່ • ສາຍພູຫຼວງ |
| ໔ | • ຄຳສັບທະຫານ • ສົກຂາບາໂລ |
| ໕ | • ສູດ-ຄຳສັບພື້ນຖານໃນພຸທສາສນາ |

## ສູນສັມມາໃນລາວ

ມີສູນ :

- ວຽງໄຊ
- ຜົ້ງສາລີ
- ສວັນນະເຂດ
- ອັຕປື
- ຫົວພັນ
- ເຊໂປນ
- ວຽງຈັນ

ສູນສັມມາເປັນບ່ອນດັບເຊື້ອລາວ, ດັບຄົນລາວຜູ້ມີຄວາມສາມາດ, ຄວາມກ້າຫານແລະດັບຜູ້ມີຄວາມຮັກຊາດ.

**ແກວດີຕໍ່ ລາວ ຢູ່ບ່ອນໃດ?**

ລາວແກວ ຮ່ວມມືປະຫັດປະຫານຄົນລາວ. ພວກເຂົາກຳລັງຍົກປະເທດລາວ ໃຫ້ແກວ. ລູກແກວຢູ່ໃນຣັຖບານລາວ ທະວີຄູນຂຶ້ນນັບມື້. ລູກຄົນລາວຫາຍໄປໃສໝົດ?

ວຽດນາມ ໄດ້ຍຶດເອົາ ສາຍທາງໂຮ້ຈິມິນ/Piste Hochiminh ທີ່ຢູ່ໃນລາວ ໄປເປັນຂອງມັນແລ້ວ ພ້ອມດ້ວຍພູຫຼວງ (ສາຍພູແດນແກວ). ຄົນລາວຜູ້ໃດບໍ່ໄດ້ຮຽນຈາກວຽດນາມ, ຣັຖບານຈະບໍ່ໃຫ້ໜ້າທີ່ດີ. ດ້ວຍເຫດນີ້ ຣັຖບານວຽດນາມຈຶ່ງ "ຊ່ວຍເຫຼືອ" ການກໍ່ສ້າງໂຮງຮຽນວຽດຂຶ້ນຢູ່ວຽງຈັນ ອັນໃຫຍ່ກວ່າທຸກໆໂຮງຮຽນໃນລາວ. ພາສາບອກຊາດ. ຫາກວ່າ ຣັຖບານວຽດນາມຍາກຊ່ວຍລາວແທ້ ເປັນຫຍັງບໍ່ຊ່ວຍສ້າງໂຮງຮຽນລາວຂຶ້ນ?

ຍາກດັບຊາດ ຕ້ອງຄ່ອຍດັບພາສາໄປກ່ອນເທື່ອລະນ້ອຍໆ



(19xx)

(http://laos.luangprabang.free.fr)

## ຄວາມປອດພັຍ

ສະຖານທູດລາວທຸກໆແຫ່ງ ຕ້ອງມີຄົນຂອງພວກລາວແກວ ເປັນຜູ້ຄຸມຢູ່ສເມີ. ສ່ວນມາກພວກນີ້ ບໍ່ແມ່ນຄົນລາວ, ເຂົາປາກລາວ ແຕ່ຫົວຂອງມັນບໍ່ເປັນລາວ.

ການທີ່ເອົາຊື່ເອົາຮູບລົງໃນສິ່ງໃດສິ່ງນຶ່ງ ອັນຄົນອື່ນສາມາດຮູ້ເຫັນໄດ້ ຈະເປັນໄພແກ່ຜູ້ມີຊື່ມີຮູບສເມີໄປ ຖ້າເຮົາບໍ່ຄິດໄປໄກ.ສິ່ງເຫຼົ່ານີ້ຈະມີໄພໜ້ອຍໃນກໍຣະນີທີ່ຜູ້ກ່ຽວຈະບໍ່ກັບຄືນເມືອລາວອີກ ກັບ ຜູ້ມີອາຍຸສັງຂານສູງແລ້ວ. ປ້ອງກັນ ພວກໝູ່ນ້ອຍທີ່ຫ້າວຫັນ, ຄົນລາວທີ່ມີຫົວດີ, ກ້າຫານ ແລະ ຜູ້ຮັກຊາດ ເປັນໜ້າທີ່ຂອງຄົນລາວ ທຸກຄົນ. ລາວຊ່ວຍລາວ-ຢ່າກໍາຈັດລາວ. ກໍາຈັດແກວ ໃຫ້ຫາຍຈາກລາວ.

ອັນນີ້ຈິ່ງປອດພັຍທັງເພິ່ນທັງໂຕ



## ວຽກຂີ້ໄຮ້ ລາວຂີ້ໄບ້ ແກວຈິ່ງເຮັດຫຍັງກະໄດ້

ໃນເກືອບທຸກກະຊວງກົມກອງຕ່າງໆ. ຫຼັງຈາກພວກຜູ້ໃຫຍ່ ອັນມີຂ້າຣາຊການ, ທະຫານ, ຕໍາຣວດແລະມີຮອດປະຊາຊົນທັມດາ ຖືກກັກຂັງທີ່ສູນສັມນາແລ້ວ ພວກໄກສອນໄດ້ຮ່ວມມືກັບແກວ ຂົນຂວາຍພວກຊາວໜຸ່ມອອກໜີຈາກປະເທດລາວເກືອບໝົດເລີຍ ແລະໄກສອນກໍສວຍໂອກາດເອົາພວກລູກແກວປາກລາວຂອດແມ່ບໍ່ຂອດແມ່ ເຂົ້າເຮັດວຽກ ຄຽງບ່າຄຽງໄລ່ກັບໄກສອນຕລອດມາຈົນຮອດເທົ່າທຸກວັນນີ້. ສ່ວນພວກຄົນທີ່ເປັນລາວແທ້, ທີ່ກັບຈາກຝຣັ່ງ, ໄກສອນບໍ່ໃຫ້ໜ້າທີ່ ເຖິງວ່າຈະມີຄວາມຮູ້ ຄວາມສາມາດຢູ່ກໍຕາມ ເພາະເຈົ້າບໍ່ມີເຊື້ອແກວ. ຖ້າເຈົ້າມີໜ້າທີ່, ເຂົາກໍພະຍາຍາມຫາເຣື່ອງໃສ່ເຈົ້າເພື່ອໄລ່ເຈົ້າອອກຈາກໜ້າທີ່ຕາມຫຼັກການແລະກໍເອົາແກວຂຶ້ນແທນ. ແກວເຮັດຫຍັງແລະເວົ້າຫຍັງບໍ່ຜິດ ຖ້າເຈົ້າເປັນລາວ ເຂົາຕ້ອງຊອມເອົາຄວາມຜິດຂອງເຈົ້າ.ຕົວຢ່າງ ທ.



(19xx)

ຜຸຍ ແກ້ວບົວລະພາ, ອະດີດເບີສອງຂອງພັກ, ຖືກປົດອອກຈາກພັກແລະຈາກໜ້າທີ່ຣັຖ-ມົນຕຣີ ເພາະທ່ານຜູ້ນີ້ເອົາຄົນລາວໜຸ່ມນ້ອຍເຂົ້າເຮັດວຽກນໍາຫຼາຍຄົນ. ໄກສອນບໍ່ຢາກໃຫ້ຄົນລາວມີໂອກາດກໍາອໍານາດ ຈິ່ງພ້ອມກັນກັບຣັຖບານແກວ ປົດທ່ານຜູ້ນີ້ອອກຈາກໜ້າທີ່ແລະຈາກທຸກໆຕໍາແໜ່ງ. ຫຼັງຈາກນັ້ນ ໄກສອນຈິ່ງຕັ້ງຄົນແກວຊື່ນາງ ດາວເຮືອງ ທີ່ປາກເຊຂຶ້ນເປັນຫົວໜ້າປ່າໄມ້ພາກໃຕ້ ອັນພາໃຫ້ຍານາງຜູ້ນີ້ກັບກາຍມາເປັນເສດຖີເບີນຶ່ງໃນລາວ. ໃນເມື່ອຍານາງຜູ້ນີ້ ໄດ້ກໍາອໍານາດແລ້ວ, ຍານາງໄດ້ແຈກດິນຫ້າເຫັກຕາຕໍ່ຄອບຄົວ ເພື່ອໃຫ້ຄົນແກວເຮັດສວນໝາກກາເຟ. ອົພຍົບລາວຫຼາຍຄົນທີ່ຂໍເປັນລາວຄືນແລະໄດ້ຮັບອະນຸຍາດຈາກຣັຖບານລາວແລະຈາກສະຫາປະຊາຊາດ ກັບຄືນເມືອບ້ານ ໄດ້ໄປຂໍດິນກັບ ຍານາງຜູ້ນີ້ ເພື່ອຈະໄດ້ເຮັດສວນໝາກກາເຟ, ເຫັກຕານຶ່ງກໍຍັງບໍ່ໄດ້. ແກວກໍາລັງກືນກິນລາວທຸກຮອບດ້ານ. ຄົນລາວທຸກຄົນແລະທຸກອົງການຈັດຕັ້ງ ຄວນເຕົ້າໂຮມກັນ ຮຽກຮ້ອງ.

## ຂ້າເຈົ້າ ເອົາຂອງ

ເຂົາທໍາຮາຍການສຶກສາຂອງລູກລາວຫຼານລາວ; ເກົ້າລ້ານກັບຕໍ່ປີ ຄືຄ່າຈ້າງເຂົ້າຮຽນດົງໂດງ ໂດຍບໍ່ມີການໄລ່ຄ່າຢູ່ຄ່າກິນ. ຄົນລາວສ່ວນຫຼາຍບໍ່ສາມາດຈ້າງໃຫ້ລູກເຂົ້າຮຽນໄດ້ ຍ້ອນວ່າ ລາວແກວສະກັດກັ້ນການສຶກສາ. ເຂົາທໍາຮາຍສຸຂພາບ ເພາະເຂົາເອົາຢາ ໂຟຼຣິດອນ ໃສ່ໃນເຫຼົ້າໃສ່ໃນເຄື່ອງດື່ມ (ຣັຖ-ບານຮູ້ເຣື່ອງນີ້ດີ). ເຂົາທໍາຮາຍອະນາຄົດຂອງ ລູກລາວຫຼານລາວ ເພາະເຂົາເອົາລູກແກວ ເຂົ້າເປັນຂ້າຣາຊການແທນ, ໄລ່ລູກລາວໄປເປັນແມ່ຈ້າງແລະໄປເຮັດການຢູ່ເມືອງໄທຍ໌. ນີ້ຄືເປົ້າໝາຍຂອງແກວ. ທໍາຮາຍ ໖ ຢ່າງທໍາອິດນີ້, ໃນຊີວິດນຶ່ງຂອງຄົນ, ຄືການຂ້າກັນທັງເປັນ.

# ຊັບທີ່ມີຣາຄາທີ່ສຸດໃນໂລກຄື ຄຳສີ່

ບໍ່ຄຳລາວຫຼາຍໆແຫ່ງຄືກແກວຍຶດເອົາຢ່າງທີ່ຄົນລາວຈະເອີ່ຍປາກຄຳນຶ່ງກໍບໍ່ມີ. ຕາມສາຍພູຫຼວງຫຼືສາຍພູແດນແກວ (ແກວເອີ້ນວ່າ Truong Son), ມີບໍ່ແຮ່ອັນຫຼວງຫຼາຍ. ຖ້າຄົນລາວ ລົງທຶນຂຸດຄົ້ນເອົາຄຳເອງ ໂດຍໃຫ້ຄົນລາວແທ້ແລະຣັຖບານລາວເປັນຜູ້ຂຸດ ປະເທດລາວຈະມີຄວາມຮັ່ງມີຂຶ້ນຫຼາຍໃນຣະຍະອັນສັ້ນໆອີກດ້ວຍ ແທນທີ່ຈະໃຫ້ຜູ້ອື່ນຂຸດຄົ້ນເອົາ ໂດຍທີ່ວ່າ ຄົນລາວຫຼືຣັຖບານລາວ ບໍ່ມີສ່ວນໄດ້ເຖິງຮອດ ໑% ຊໍ້າ. ການລົງທຶນຂຸດຄົ້ນບໍ່ແຮ່ ດີກວ່າການລົງທຶນເຮັດເຂື່ອນໄຟຟ້າຫຼາຍເທົ່າ. ຄຳ ເປັນໂລຫະອັນລໍ້າຄ່າ ທີ່ສາມາດຄໍ້າປະກັນ ເງິນກີບໃຫ້ມີອັດຕຣາສູງຂຶ້ນໄດ້. ໃນເມື່ອເງິນກີບມີຣາຄາສູງ, ປະເທດລາວສາມາດ ຊື້ເຄື່ອງກົນຈັກແລະຍຸດໂທປະກອນຕ່າງໆ ເພື່ອພັທນາປະເທດໃຫ້ເຂັ້ມແຂງ. ນອກຈາກນັ້ນ ຣັຖບານລາວສາມາດພັທນາການສຶກສາແລະຍົກຣະດັບການເປັນຢູ່ແລະການຄອງຊັບ ຂອງປະຊາກອນໃຫ້ດີຂຶ້ນ.ອັນໜ້າເສົ້າສລົດໃຈທີ່ສຸດຄືທຸກສິ່ງຢ່າງທີ່ເປັນຣາຄາແມ່ນແກວ ເປັນຜູ້ກຳແລະຜູ້ຍຶດເອົາໄປເປັນຂອງມັນຢ່າງບໍ່ໄດ້ຈ່າຍຮອດກີບນຶ່ງຫຼືຫຽນນຶ່ງ. ຕົວຢ່າງ ເມື່ອບໍ່ນານມານີ້ ແກວໄດ້ຍຶດເອົາແຮ່ຄຳທີ່ຊຽງຂວາງໄປເປັນຂອງມັນແບບໜ້າເສີຍໆ. ມີບໍ່ຄຳແຫ່ງນຶ່ງອີກທີ່ ອັຕປື, ຕອນຕົ້ນ ແກວມາຊ່ວຍຄົນລາວຄົ້ນຄວ້າວິທີຂອກຫາຄຳ ແລະຕໍ່ມາທະຫານແກວມາໄລ່ຄົນລາວໜີ (ທະຫານແກວມາຮັກສາຄວາມປອດໄພໃຫ້ລາວ), ເຂົາປ່ອຍໃຫ້ແຕ່ພວກຂ້າຢູ່ ດ້ວຍການເອົາຄວາຍໃຫ້ຂ້າກິນທຶດລະໂຕ. ຄົນລາວບໍ່ມີສິດຜ່ານໄປໃກ້ແຖບນັ້ນອີກ (ຄົນອັຕປືຮູ້ເຣື່ອງນີ້ດີ )... ເຣື່ອງແບບນີ້ມີຫຼາຍເກີນໄປໂພດ ເພື່ອຈະ



(19xx)

ແກວກຳລັງກິນກົນລາວ. ຢູ່ໃນສະພາ ທີ່ວ່າການຕ່າງໆຂອງລາວ ຕ້ອງແມ່ນ ແກວທັງນັ້ນເປັນຜູ້ບົ່ງການ. ລາວແກວ ໝາຍເຖິງ ພວກຄົນລາວກຸ່ມນຶ່ງທີ່ຮັບ ໃຊ້ແຜນການແກວກິນກົນລາວ ຢ່າງບໍ່ ຮູ້ສຶກຕົວກັບພວກ ຫົວເປັນແກວແອວ ເປັນລາວ. ພວກນີ້ມີ ທັງລາວ ທັງຂ້າ ທັງແມ້ວ ທັງແກວ ມີຮອດທັງເຈັກ. ຄົນລາວແທ້ ໃນສູນກາງແຫ່ງ ອຳນາດ ແລະຜູ້ມີອຳນາດອັນແທ້ຈິງ ຫຼືອຳນາດ ສູງສຸດ ໃນທີ່ວ່າການອັນສຳຄັນ ຕ່າງໆ ຈະມີຈຳນວນນ້ອຍ. ແກວ ລໍຖ້າເວລາ ແລະໂອກາດ ອັນເໝາະສົມ ເທົ່ານັ້ນ ເພື່ອເຮັດໃຫ້ ໂລກຮູ້ວ່າ ຣັຖບານ ວຽດ ກັບຣັຖບານລາວ ເປັນອັນດຽວກັນ ນັບ ແຕ່ມື້ນີ້ຕໍ່ໄປ, ເໝືອນດັ່ງດຽວກັນກັບ ສາຍທາງໂຮ້ຈິມິນ ເປັນຂອງວຽດນາມ. ພວກສູນກາງ ເວົ້າລາວຮອດບໍ່ຂອດ!



(19xx)

# ສູນກາງພັກ ບໍ່ມີຄົນລາວທີ່ມີຄວາມຮູ້

ຕາມຊາຍແດນ ແມັກຊິໂກ-ສະຫາຣັດອະເມຣິກາ, ຣັຖບານ ອະເມຣິກາ ໄດ້ຈ່າຍເງິນອັນຫຼວງຫຼາຍ ເພື່ອຈ້າງເຂົາເຮັດຮົ້ວກັນຕ້ານພວກແມັກຊິແກນລັກເຂົ້າເມືອງ. ສາຍພູຫຼວງ/chaîne annamitique ເປັນພູໃຫຍ່ແລະສູງອັນມີຄວາມຍາວແຕ່ເໜືອຈົນເຖິງອັຕປື. ພ້ອມໆດຽວກັນນັ້ນ ເສັ້ນພູສາຍນີ້ ຍັງເປັນຮົ້ວທັມຊາດທີ່ສາມາດຂວາງກັ້ນການຣຸກຮານຂອງພວກວຽດນາມ ແລະພວກເຂົ້າເມືອງເຖື່ອນ ອີກດ້ວຍ ໂດຍການລົງທຶນພຽງເລັກນ້ອຍກໍພຽງພໍກັບຄວາມຕ້ອງການ. ອີກປະການນຶ່ງ, ສາຍທາງ ໂຮ້ຈິມິນ ກໍຕັ້ງຢູ່ໃນລາວ.ໃນເມື່ອສາຍທາງເສັ້ນນີ້ກາຍໄປເປັນຖນົນແຫ່ງຊາດຂອງວຽດນາມ ທຸກສິ່ງ ຢ່າງທັງໝົດທີ່ຕັ້ງຢູ່ໃນຣະຫວ່າງເສັ້ນທາງແລະເສັ້ນພູນັ້ນ ກໍກາຍໄປເປັນຂອງວຽດເໝືອນກັນ. ຈັ່ງ ໃດ ຈິ່ງວ່າແກວບໍ່ກິນກົນລາວ? ຄວາມຮັ່ງມີຂອງລາວແມ່ນບໍ່ແຮ່ຕ່າງໆທີ່ເຕັມໄປຕາມສາຍພູຫຼວງ.

ວຽດນາມໄດ້ຍຶດເອົາ ສາຍທາງໂຮ້ຈິມິນ /Piste Hochiminh ທີ່ຢູ່ໃນລາວໄປເປັນຂອງມັນແລ້ວ ພ້ອມດ້ວຍ ພູຫຼວງ (ສາຍພູແດນແກວ). ຄົນລາວຜູ້ໃດບໍ່ໄດ້ຮຽນຈາກວຽດນາມ ບໍ່ສາມາດເຮັດການນຳຣັຖບານໄດ້. ດ້ວຍເຫດນີ້ ຣັຖບານວຽດນາມຈິ່ງມາ "ຊ່ວຍເຫຼືອ" ກໍ່ສ້າງໂຮງຮຽນວຽດຂຶ້ນຢູ່ວຽງຈັນ ທີ່ໃຫຍ່ກວ່າທຸກໆໂຮງຮຽນໃນລາວ. ພາສາບອກຊາດ. ຫາກວ່າ ຣັຖບານວຽດຢາກ ຊ່ວຍລາວແທ້ ເປັນຫຍັງບໍ່ຊ່ວຍສ້າງໂຮງຮຽນລາວຂຶ້ນ? ກົດໝາຍປະກັນການເປັນຢູ່ກັບອະນາຄົດລູກລາວຫຼານລາວຢູ່ໃສ?

ຄົນອັບປັນຍາ ເຖິງຈະມີຊັບຂອງພຣະຣາຊາ ກໍຮັກສາໄວ້ບໍ່ໄດ້

# ແກວເຮັດໄດ້ ເພາະລາວເປັນໃບ້

ເອົາມາເລົ່າສູ່ກັນຟັງໃຫ້ຈົບກົກຈົບປາຍ. ຄົນລາວຄວນເຂົ້າໃຈວ່າ ບໍ່ຄຳມີຫຼາຍແຫ່ງໃນລາວ, ຄວນປົກປ້ອງຮັກສາໄວ້ໃຫ້ເປັນທຶນ. ຊັບໃນດິນສິນໃນນ້ຳທຸກຢ່າງເປັນກຸນແຈອັນສຳຄັນ ໃນການສ້າງສາພັທນາປະເທດ. ລາວ ມີ ຊັບໃນດິນທຸກຢ່າງ. ໃນເມື່ອສຽງພູຫຼວງ, ທີ່ເຕັມໄປດ້ວຍບໍ່ແຮ່ຕ່າງໆ, ບໍ່ຢູ່ໃນຄວາມຄຸ້ມຄອງຂອງລາວແລ້ວ ໃຜຈະບໍ່ມອງເຫັນວ່າລາວເສື່ອມໆເໝືອນຖິ້ມນ້ຳຕານລົງໃສ່ນ້ຳມັ້ນເອງ,ຊາດລາວກຳລັງໂຫຼ້ມຈົມ ແລະຄຳວ່າລາວ ກໍກຳລັງຖືກແກວດັບ.

ຕລາດໂລກຂາຍຄຳຝັກນຶ່ງຣາຄາ ໑໓000 ດອນລາ ຕໍ່ກິໂລ, ທ່ານສາມາດພິສູດເບິ່ງໄດ້ຕາມເຄືອເສັ້ນນີ້:

http://www.banquedefrance.fr/fr/poli_mone/taux/html/1.htm

ອົສເຕຼເລັຍ, ນິວຊີແລນ ຂຸດຄຳໄດ້ຫຼາຍຕັນໃນເມືອງລາວ. ຄຳຕັນນຶ່ງມີ ໑000 ກິໂລ, ເອົາມາຄູນໃຫ້ ໑໓000 ດອນລາ, ເທົ່າກັບ ໑໓ ລ້ານ ດອນລາ. ການຂຸດຄົ້ນກໍບໍ່ໄດ້ໃຊ້ຄວາມຮູ້ພິເສດຫຍັງຫຼວງຫຼາຍ, ຄົນລາວໃບ້ ກໍຍັງສາມາດເຮັດໄດ້. ເປັນດ້ວຍເຫດໃດ ຄົນລາວບໍ່ໃຫ້ຄວາມສຳຄັນໃນຊັບທີ່ຕົນມີຢູ່ແລ້ວ?

ຍັງມີຄຳແບບໃໝ່ອີກສີ່ປະເພດທີ່ມີຣາຄາສູງ ແລະ ເປັນຂອງຫາໄດ້ຍາກ ອັນມີຄື ຄຳດຳ, ຄຳຟ້າ, ຄຳຂຽວແລະຄຳກາກ.

ເພິ່ນເອີ້ນນ້ຳມັນ ເປໂຕຣນ ວ່າ ຄຳດຳ. ເປໂຕຣນ ເປັນຊັບໃນດິນອັນມີຄ່າຫຼວງຫຼາຍເໝືອນກັນກັບຄຳອື່ນ ແລະເປັນປໂຍດໃນການສ້າງ ພະລັງໄຟຟ້າ, ນ້ຳມັນເຄື່ອງຈັກ, ເຄື່ອງອຸປໂພກບໍຣິໂພກ, ຢາງປູທາງ ຫຼື ຢາງໝາກຕ໋ອຍ, ຯລຯ. ໂຮງຈັກໂຮງງານ ແລະ ອຸສຫະກັມຕ່າງໆໃຊ້ ເປໂຕຣນ ໃນການສ້າງສາພັທນາປະເທດ ຈົນເວົ້າໄດ້ວ່າ ເປໂຕຣນ ເປັນເດີມພັນຍຸທສາດອັນນຶ່ງ. ເພິ່ນຮ້ອງນ້ຳຈືດວ່າ ຄຳຟ້າ (ສີຟ້າ). ນ້ຳຈືດກາຍເປັນສິນຄ້າອັນສຳຄັນທີ່ສຸດໃນໂລກ, ຕົກເປັນເງິນ ໘00 ຕື້ ດອນລາ ຕໍ່ປີ (໘00.000.000.000) ຖ້າໄລ່ເປັນຕົວເລກ. ໗໓% ໃຊ້ໃນກະສິກັມ, ໒໑% ໃຊ້ໃນອຸສຫະກັມ,

ຕາມຈົດໝາຍບັນທຶກ ເລກທີ ໓໕-໓໖ ລົງວັນທີ ໘, ໑໑ ແລະ ໑໓ ເດືອນ ອັງວິເຍ ໑໙໕໔, ຄນະກັມການທະຫານລາວ ໄດ້ຮຽບຮຽງໜັງສືຂ້າງລຸ່ມນີ້:

ຣະບຽບແຖວແລະພິທີ /Ordre serré et cérémonies

## ການຕັ້ງແຖວ

໑- ແຖວລອຍ/Colonne
໒- ແຖວລຽນ/Ligne
໓- ໜ້າແຖວລອຍ/Front d'une ligne
໔- ຂໍ່ວແຖວລອຍ/Profondeur d'une colonne
໕- ໜ້າແຖວລຽນ/Front d'une ligne
໖- ຂໍ່ວແຖວລຽນ/Profondeur d'une ligne
໗- ແຖວ/Rang
໘- ສາຍ/File
໙- ຣະຍະຕໍ່/Distance
໑໐- ຣະຍະຍຽ/Intervalle
໑໑- ໂຮມສາມແຖວລອຍ/Rassemblement en colonne par 3
໑໒- ໂຮມສາມແຖວລຽນ/Rassemblement en ligne sur 3 rangs
໑໓- ເລີກແຖວ/Rompez vos rangs

## ການລຽນແຖວ

Alignement

໑- ຜູ່ນຳ/Guide
໒- ຜູ່ເປັນຫຼັກ/Homme de base
໓- ຜູ່ກົກຫຼັກ/Homme de pivot
໔- ຜູ່ປາຍຫຼັກ/Aile marchante
໕- ຣະຍະສອກ/Distance de coude à coude
໖- ຣະຍະແຂນ/Distance de bras
໗- ແຖວ...ຈັດ/En colonne...couvrez
໘- ຂວາແຖວຈັດ/A droite alignement (ou à gauche)
໙- ກົງ! (ຄືເອົາປົນລົງບ່າແລະແອວ)/Fixe. (ຈົບ ບົ້ນ ໒).

ເອກສານ: ວັນຄະດີສານ ເດືອນມິນ ພຸທສັກຣາດ ໒໔໙໗ (ມາກສ໌ ໑໙໕໔), ສະບັບທີ ໕, ຄນະກັມການວັນຄະດີ, ກະຊວງສຶກສາທິການ.

### ສຶກຂາປາໂລ

- ຮຽນຮ່ຳ ແລະ ຮ່ຳຮຽນ ຄວາມອັງກິດ. ເໝາະສົມສຳລັບເດັກນ້ອຍລາວ : http//www.starfall.com
- ປຶ້ມສັງຂຍາ ຍ່າສັງກະສີ ຂອກໄດ້ທີ່ນີ້. ເອກສານເກົ່າແກ່ (ໄທລາວ) : http://gallica.bnf.fr

ທຸກທ່ານຂຽນເຣື່ອງເປັນປໂຍດສຳລັບສັງຄົມລາວ ລົງໃນສານນີ້ໄດ້.

ຂອບໃຈທຸກໆທ່ານທີ່ໄດ້ ເສັຽສລະອ່ານ, ແນະນຳລີລາການຂຽນ ແລະ ການອອກລວດລາຍ ພ້ອມທັງຜູ້ທີ່ໄດ້ອະນຸຍາດໃຫ້ເອົາຜົນງານຂອງທ່ານ ມາລົງນະທີ່ນີ້.

ກັມການ ມທລ ຈະຈັດປະຊຸມປະຈຳປີ ເພື່ອກະກຽມພິທີພິເສດສຳລັບຜູ້ອາວຸໂສໃນປີ ໒໐໐໗ ແລະປັບປຸງກັມມາທິການໃຫ້ດີຂຶ້ນກວ່າປີຜ່ານໆມາ. ພ້ອມດຽວກັນນີ້ ທາງຄນະຈະນຳເອົາ ເຣື່ອງການຕ້ອນຮັບ ໄປສຶກສາ (Accueil et communication). ອີກປະການນຶ່ງ, ກັມການພ້ອມດ້ວຍສະມາຊິກທຸກຄົນ ຂໍຖືໂອກາດ ສະແດງຄວາມໂຄຣົບ ມາຍັງບັນດາທ່ານທຸກຄົນ ທີ່ໄດ້ໄປຮ່ວມໃນງານໄຫວ້ອາລັຍ ແດ່ດວງວິນຍານຂອງນາຍ ແລະພົນທະຫານທີ່ຖືກຂ້າຕາຍ ຢູ່ສູນສັມມາອັນມີ ໄກສອນ ພ້ອມດ້ວຍຄນະລາວວຽດ ເປັນຜູ້ບົງການ ໃຫ້ຂ້າດັບຄົນລາວເທື່ອລະເລັກເທື່ອລະນ້ອຍ. ລາວທຸກຄົນ ຄວນຄິດສເມີວ່າ ຖ້າຄົນທີ່ເປັນລາວແທ້ ທີ່ມີຄວາມສາມາດ,ບໍ່ສາມາດກຳອຳນາດໄດ້ ແລະ ພວກນີ້ຢູ່ໃນສູນກາງພັກມີໜ້ອຍ, ຊາດລາວຕ້ອງດັບ.ຍ້ອນທຸກສິ່ງຢ່າງແມ່ນສູນກາງພັກ ເປັນຜູ້ບົງການ. ພວກມົນຕຣີຕ່າງໆເປັນພຽງແຕ່ຫຸ່ນ, ເປັນວັດຖຸເຄື່ອງໃຊ້ຂອງພັກອັນບໍ່ມີຈິດວິນຍານໃດໆທັງສິ້ນ; ປຽບແລ້ວຄົນໃບ້ຍັງມີຈິດວິນຍານ.ຄົນລາວເກືອບທຸກຄົນ ກາຍເປັນເຄື່ອງມືຂອງແກວ. ດ້ວຍເຫດນີ້, ເຮົາບໍ່ຄວນເວົ້າຕໍ່ໄປອີກວ່າ ຄຳໄຕເຖົ້າແກ່ແລ້ວ ໃນເມື່ອຕາຍໄປ ຕ້ອງມີຄົນລາວຜູ້ດີຂຶ້ນແທນ.

## ຢ່າປ່ອຍໃຫ້ແກວ ກຳອະນາຄົດຂອງປະເທດ-ຊາດ

### Ressources naturelles

໘%ໃຊ້ຕາມເຮືອນຊານບ້ານຊ່ອງ.ນ້ຳຈືດກຳລັງເລີ້ມອຶດ ຍ້ອນວ່າມີພຽງ ໓%ຂອງນ້ຳໃນໂລກ ເພື່ອລ້ຽງປາກຂອງ ໖໕ ຕື້ຫົວຄົນໃນທົ່ວໂລກ. ດ້ວຍເຫດນີ້ຈີນຈິ່ງສ້າງອ່າງຂັງນ້ຳຈືດໄວ້ ເພື່ອໃຫ້ເປັນທັງສາງນ້ຳ, ເປັນທັງຖັງນ້ຳ. ພ້ອມດຽວກັນນັ້ນ ຍັງໃຊ້ເປັນເຂື່ອນໄຟຟ້າ ເພື່ອບຳຣຸງໂຮງຈັກໂຮງງານແລະສະຖານທີ່ຕ່າງໆໃນທົ່ວປະເທດ ໂດຍຈຸດປະສົງຢາກໃຫ້ມີຄວາມຈະເຣີນ ແລະ ຄວາມກ້າວໜ້າຂອງຊາວຈີນໃນທົ່ວປະເທດອີກດ້ວຍ. ຖ້າມອງໄປໄກໆແລ້ວ ຈະເຫັນໄດ້ວ່າບໍ່ມີໂຄງການອັນໃດໃນລາວສ້າງຂຶ້ນເພື່ອອະນາຄົດຂອງລູກລາວຫຼານລາວ. ຊາວລາວໃນປະເທດ ກາຍເປັນຄົນໄຮ້ອະນາຄົດ ແລະໄຮ້ແຜ່ນດິນ. ລາວຕ້ອງການໄຟຟ້າບໍ່ຫຼາຍ. ສະນັ້ນ ເຂື່ອນໄຟຟ້ານ້ຳເທີນ ແລະ ບ່ອນອື່ນໆເປັນພຽງສາກບັງໜ້າເທົ່ານັ້ນ ເພາະວ່າ ແກວຕ້ອງການໄຟຟ້າແລະສິ່ງສຳຄັນທີ່ສຸດຄືແກວຈະບໍ່ມີນ້ຳຈືດພຽງພໍກັບຄວາມຕ້ອງການປະຈຳວັນ. ແກວຈອບອອຍໃຫ້ຄົນລາວຂໍຄວາມຊ່ວຍເຫຼືອຈາກຕ່າງປະເທດ ສ້າງເຂື່ອນໄຟຟ້າຂຶ້ນ ເພາະວ່າປະເທດລາວຈະຕົກໄປເປັນຂອງແກວ. ເຮົາຈະສັງເກດເຫັນໄດ້ວ່າ ໃນສູນກາງພັກ, ຄົນທີ່ເປັນລາວແທ້ມີໜ້ອຍ. ຍິ່ງໄປກວ່ານັ້ນ, ຄົນລາວທີ່ມີຄວາມຮູ້ຄວາມສາມາດ ຖືກບັດກວດອອກຈາກອຳນາດໜ້າທີ່ພັກແລະໜ້າທີ່ຣັຖກອນໃຫ້ໄກເທົ່າທີ່ຈະໄກໄດ້. ເຂົາສົ່ງຜູ້ເປັນຄົນລາວແທ້ອອກໄປເປັນທູດ ເພື່ອໃຫ້ໄກຈາກອຳນາດບໍຣິຫານພາຍໃນ, ເຂົາເອົາແຕ່ພວກທີ່ປາກລາວບໍ່ຂອດເຂົ້າສັງກັດຢູ່ໃນສູນກາງພັກແລະເປັນຣັຖມົນຕຣີຕ່າງໆ. ສ່ວນພວກລູກຄົນລາວທີ່ຮຽນຈົບຈາກຍີ່ປຸ່ນແລະຈາກຈີນນັ້ນ ມີຄວາມຫວັງນ້ອຍທີ່ສຸດທີ່ຈະໄດ້ເປັນເຈົ້ານາຍຜູ້ບົງການໄດ້ ດ້ວຍຕົນເອງ (ມີແຕ່ຄົນແກວປາກລາວ ເປັນຜູ້ບົງການໃນກະຊວງຕ່າງໆ). ສະນັ້ນ, ໃຫ້ທ່ານຄິດເອົາເອງວ່າ ວຽກການກໍ່ສ້າງໃຫຍ່ໆໃນລາວ ດັ່ງເຂື່ອນນ້ຳເທີນ ມີຜົນປໂຍດໃຫ້ແກ່ຄົນລາວຫຼາຍປານໃດ, ໃຜໄດ້ປໂຍດຫຼາຍກວ່າຄົນລາວ. ແມ່ນໃຜ ຮັບເໝົາເອົາວຽກການກໍ່ສ້າງເຂື່ອນ...



ເພີ່ນຮ້ອງທັມຊາດທຸກຢ່າງທີ່ຕັ້ງຢູ່ໃນປະເທດວ່າ ຄຳຂຽວ ດັ່ງພູຜາປ່າໄມ້ຕ່າງໆ ເພາະວ່າຢູ່ອ້ອມແອ້ມພູ,ຢູ່ໃຕ້ຢູ່ໃນພື້ນພູ ມີບໍ່ແຮ່ແລະບໍ່ນ້ຳ; ທັມຊາດທີ່ເກີດຢູ່ໃນປະເທດ ດັ່ງປ່າໄມ້ເປັນຕົ້ນ. ນັກທ່ອງທ່ຽວຊົມທັມຊາດ, ມີປ່າໄມ້ຂຽວ, ນັບມື້

ຄວາມຄິດອັນນີ້ແມ່ນແຜນການແກວ ສ້າງຂ່າວແລະປ້ອນຂ່າວ ໃຫ້ລາວຫົວອ່ອນຄິດ, ເພາະວ່າແກວຕ້ອງການພຽງເວລາ. ຄຳໄຕຕາຍໄປເຂົາກໍເອົາຄົນລາວໂງ່ຜູ້ໃໝ່ຂຶ້ນແທນ, ໃຊ້ເຈົ້າແລ້ວ, ເຄື່ອງມືໂຕນີ້ໝົດປໂຍດແລ້ວ ຫຼື ໃຊ້ການບໍ່ໄດ້ອີກ ເຂົາກໍເອົາໂຕໃໝ່ມາໃຊ້, ຯລຯ, ຈົນກວ່າ ລູກແກວທີ່ປາກລາວໄດ້ ໃຫຍ່ເຕີບໂຕມີຄວາມສາມາດກໍອຳນາດໄດ້ ໃນຕອນນັ້ນລູກຫຼານຂອງລາວຈະຮູ້ວ່າ ຊາດລາວ+ຊາດແກວ = ປະເທດແກວ. ຄົນລາວບໍ່ຄວນໝິ່ນປມາດຄວາມຕ້ອງການ, ຄວາມສາມາດ ແລະ ອິດທິພົນຂອງແກວໃນສັງຄົມລາວ ແລະໃນໂລກ. ພະຍາຍາມ ສ້າງຄວາມເປັນລາວ ດ້ວຍການເລັ້ມຕົ້ນ ສ້າງຄວາມຮັກແພງ ຣະຫວ່າງລາວເສັຽກ່ອນ, ຄືການເລັ້ມຕົ້ນຮັບຮູ້ທາງກົດໝາຍ ເອົາຄົນລາວແທ້ຢູ່ຕ່າງປະເທດ ເປັນຄົນລາວເໝືອນກັນກັບທ່ານ ຊຶ່ງຢູ່ໃນຈຳນວນນັ້ນ ອາດມີພີ່ນ້ອງຂອງທ່ານເອງກໍເປັນໄດ້, ແທນທີ່ຈະເອົາແກວ ມາເປັນອ້າຍນ້ອງ.

ກ່ອນມັນຈະຊ້າເກີນໄປ.

**ມທລ** ຂໍຮຽກຮ້ອງ ໃຫ້ທະຫານລາວທຸກຄົນສ້າງຄວາມສາມັກຄີ ຣະຫວ່າງ ພົນແລະນາຍທະຫານລາວ ໃນອະດີດຫຼືໃນເປັນປັດຈຸບັນ ກໍດີ; ໃຫ້ໄປຢ້ຽມຢາມຖາມຂ່າວກັນເລື້ອຍໆ. ຖ້າວ່າຄອບຄົວ ພົນແລະນາຍທະຫານຜູ່ໃດ ທຳບຸນກິນທານ ຫຼືມີການເຈັບການຕາຍ, ຂໍໃຫ້ພວກທ່ານທັງຫຼາຍ ພະຍາຍາມໄປຄາທີ່ໃຫ້ໄດ້ ໃນນາມສ່ວນຕົວຍິ່ງດີ. ບໍ່ໃຫ້ຄືຕົວວ່າ ທ່ານຄືກເຊັນຫຼືບໍ່, ມີພຽງແຕ່ສເມີຕົວວ່າ ມາໃນນາມທະຫານເໝືອນກັນ.ຈຶ່ງຈາກໄປຕາມສະພາບ.

## ມັນປາກລາວຢູ່ ແຕ່ຫົວມັນບໍ່ເປັນລາວ

ມັນຫຼາຍຂຶ້ນ. ນັກທ່ອງທ່ຽວຈ່າຍຄ່າຢູ່ກິນເວລາທ່ຽວຊົມປະເທດນຶ່ງໆ ຢ່າງຕໍ່າສຸດ ໕00 ດອນລາ, ອັນເປັນການສົມທົບເຂົ້າເສດກິດທ້ອງຖິ່ນ (ຖ້າມີນັກທ່ອງທ່ຽວ ໕ ລ້ານຄົນ. ໕.000.000x໕00$=໒໕.000.000$). ໄມ້ເປັນສິນຄ້າອັນມີຣາຄາສູງທີ່ສຸດໃນປັດຈຸບັນ ແລະສາມາດໃຊ້ເປັນປໂຍດຫຼາຍຢ່າງນາໆຊນິດ. ອີກປະການນຶ່ງ ປ່າໄມ້ຜະລິດ ອ໋ອກຊີເຈັນ ແລະຊ່ວຍປາບຄວາມເປິະເປື້ອນໃນອາກາດ. ການທຳຣາຍປ່າໄມ້ ແລະການຂາດປ່າໄມ້ ເປັນຜົນສະທ້ອນອັນຮ້າຍແຮງສຳລັບ ສິ່ງແວດລ້ອມແລະສຳລັບຄົນໃນທົ່ວໂລກ.ສະນັ້ນ, ປະເທດຮັ່ງມີຈະຍື່ນມືມາຈອບໃຫ້ຄວາມຊ່ວຍເຫຼືອສເມີ ທາງດ້ານການເງິນ, ດ້ານການຝຶກຫັດເຈົ້າໜ້າທີ່ກົມປ່າໄມ້ ແລະຊ່ວຍເຫຼືອທຸກຢ່າງໃນດ້ານນີ້ (ຂາດປ່າໄມ້ ຄືຂາດການຊ່ວຍເຫຼືອ).

ເພິ່ນຮຽກວ່າ ຄຳກາກົ ຄື ກອງທັບແຫ່ງຊາດ ຂອງແຕ່ລະປະເທດ ອັນມີຜູ້ບັນຊາການສູງສຸດເປັນຜູ້ບັ່ງການ ແລະ ມີກຳລັງທັບປະກອບອາວຸດ ເປັນຂອງຕົນເອງ, ໂດຍບໍ່ຂຶ້ນກັບປະເທດອື່ນດັ່ງ ສປປລ ເອົາກຳລັງທັບວຽດນາມ ມາຄຸມຄົນລາວ ແທນທີ່ຈະສ້າງກຳລັງທັບລາວຂຶ້ນ ທັງໆທີ່ເສິກເໜືອເສືອໃຕ້ ບໍ່ມີອີກຕໍ່ໄປ. ກອງທັບແຫ່ງຊາດປະກອບດ້ວຍກຳລັງທັບຕ່າງໆດັ່ງ ທະຫານນໍ້າ, ທະຫານອາກາດ, ທະຫານບົກ ແລະ ຍັງມີກຳລັງທະຫານ ໝໍປົວແລະໝໍຢາ ເພີ້ມເຕີມ. ພັກຣັດ ຕ້ອງປັບປຸງ ກອງທັບແຫ່ງຊາດ ໃຫ້ເຂັ້ມແຂງ ເພື່ອໃຫ້ມີຄວາມສາມາດປ້ອງກັນຄວາມປອດພັຍ ເພື່ອນຮ່ວມຊາດ, ປ້ອງກັນເສດກິດ ແລະຊັບໃນດິນສິນໃນນໍ້າຂອງຊາດບໍ່ໃຫ້ຖືກທຳຣາຍ, ຊາດຈິ່ງຈະມີຄວາມກ້າວໜ້າໄດ້.

ມີກອງທັບແຫ່ງຊາດ ບໍ່ໝາຍຄວາມວ່າມີຈຸດປະສົງຢາກເຮັດເສິກ. ກອງທັບແຫ່ງຊາດ ເປັນກຳລັງຄໍ້າປະກັນຄວາມປອດພັຍ ຊັບແລະຜົນປໂຍດຂອງຊາດ, ປ້ອງກັນເຂດນໍ້າແດນດິນ ເພື່ອໃຫ້ລູກລາວຫຼານລາວ ສາມາດສ້າງເນື້ອສ້າງຕົວແລະດຳຣົງຊີວິດຢູ່ໃນຄວາມປອດພັຍໃນຜືນແຜ່ນດິນລາວແຫ່ງນີ້ ອັນເປັນສົມບັດ-ເປັນມູນມໍຣະດົກຂອງພວກລູກລາວຫຼານລາວແທ້ທຸກຄົນ ຊຶ່ງບັນພຣະບຸຣຸດລາວ ໄດ້ສລະຊີວິດແລະເລືອດເນື້ອ ຕໍ່ສູ້ກັບສັດຕຣູທີ່ຫວັງກືນກິນລາວ (ດັ່ງແກວໃນປັດຈຸບັນ) ແລະ ເພື່ອຖ່າຍທອດມູນອັນນີ້ປະໄວ້ເພື່ອຄົນລາວ.

ນອກຈາກນີ້, ກອງທັບແຫ່ງຊາດ ຍັງເປັນກຳລັງສ້າງອິດທິພົນ ແລະເຮັດໃຫ້ປະເທດອື່ນຢ້ານແລະຢໍ່າເກງອີກດ້ວຍ (La force d'influence et de dissuasion).

**ໝາຍເຫດ:** ຂອບໃຈມາຍັງເຈົ້າຂອງສານນີ້ ທີ່ໄດ້ອະນຸຍາດໃຫ້ຄນະເຮົາ ດັດແປງເນື້ອຄວາມບາງຕອນ ເພື່ອໃຫ້ເຂົ້າກັບສະພາບຕົວຈິງຢູ່ລາວໃນປັດຈຸບັນ.

Bulletin du Laos – 20060505_03C

# ສູຕ - ຄຳສັບພື້ນຖານໃນ ພຸທສາສນາ

ຄຳລາວວ່າ ພຣະ, ຈາກຄຳບາລີວ່າ ວຣ, ອ່ານວ່າ ວະຣະຫຼືວອນ ແລະແຜງມາເປັນຄຳລາວວ່າ ພອນ, ແປວ່າດີເລີດ, ປະເສີດ; ໝາຍເຖິງສິ່ງທີ່ສັກກາຣະບູຊາ ແລະ ສິ່ງສັກສິດ.

ເຈົ້າ ກໍເປັນຄຳສັກສິດອີກຄຳນຶ່ງ. ຮາກເຄົ້າ/Ethymologie ໃນຄຳລາວໝາຍເຖິງ ເຈົ້າຂອງ (ຫົວໜ້າ. ໃຜເປັນເຈົ້າ=ຫົວໂຈກຫົວໂປ່). ຄຳວ່າ ເຊື້ອເຈົ້າ ກໍໝາຍເຖິງຜູ້ມີເຊື້ອທີ່ເປັນເຈົ້າຂອງ. ເຈົ້າຊີວິດ ໝາຍເຖິງຜູ້ເປັນ ເຈົ້າຂອງແຫ່ງຊີວິດ. ເຈົ້າແຜ່ນດິນ ເປັນທັງເຈົ້າຂອງແຜ່ນດິນ, ເປັນທັງເຈົ້າຂອງທຸກສິ່ງຢ່າງທີ່ຢູ່ໃນແຜ່ນດິນຜືນນັ້ນ. ໜ້າທີ່ ເຈົ້າແຜ່ນດິນ ໄດ້ກາຍມາເປັນ ເຈົ້າຊີວິດ ໃນບັ້ນປາຍຂອງປະເທດລ້ານຊ້າງ (ຊາວໄທຍ໌ຮຽກກັນວ່າ "ພຣະ" ເຈົ້າຢູ່ຫົວ).

ສາສນາ, ເດີມເຄົ້າເປັນຄຳບາລີແລະແປເປັນຄວາມລາວວ່າ ຄຳສອນ, ແປຕາມໂຕເປັນຄວາມ ຝຣັ່ງ ແລະ ອັງກິດ ວ່າ Enseignement/Teaching. ໃນກໍຣະນີ ທີ່ເຮົາແປຄຳ ສາສນາ ນີ້ວ່າ Religion, ຢ່າງຕ່ຳສຸດເຮົາຄວນຊອກເຂົ້າໃຈຄວາມໝາຍ /Définition ຂອງຄຳ Religion ນີ້ເສັຽກ່ອນຈະເປັນການດີແທ້. ໃນຄຳ Religion ຕ້ອງມີພາກສ່ວນທີ່ເປັນຄຳສອນ.

ພຸທ, ອ່ານວ່າ ພຸດຫຼືພຸດທະ ຕາມຖານະຂອງມັນ, ມາ-ຈາກຄຳບາລີ ພຸທທ໌/Bouddha ອັນແປວ່າ ຜູ້ຮູ້ຊັດຮູ້ແຈ້ງດີ ແລະໃຊ້ໄດ້ຫຼາຍຢ່າງ ຕາມເນື້ອໃນຂອງປໂຍກ. ສາສນາພຸດ ຫຼື ພຸທສາສນາ/Bouddhisme/(L’enseignement du bouddha) ໝາຍເຖິງ ຄຳສອນ ຂອງ ພຣະພຸທເຈົ້າ ຫຼືວ່າຂອງ "ພຣະ" ພຸທທ໌/Bouddha. ເພິ່ນຮ້ອງ ຄຳສອນ ຂອງ ພຣະພຸທເຈົ້າ ວ່າ ພຣະທັມ ຫຼືວ່າ ທັມມະ ດັ່ງວ່າ ບໍ່ຢູ່ໃນສິນ ບໍ່ກິນໃນທັມ (ພຸທທ໌/ພຣະພຸທເຈົ້າ, ທັມມ໌/ພຣະທັມ, ສັງຄ໌/ພຣະສົງ). ຄົນລາວມັກຈະເວົ້າກັນວ່າ ພຣະໄທຍ໌, ພຣະລາວ, ພຣະຂເມນ, ພຣະພຸທຮູບ/ຮູບ. ຖ້າເພິ່ນເວົ້າວ່າ ພຣະພຸດ ເພິ່ນໝາຍເຖິງ ຄູບາ (ພຣະ, ຄຣູບາ/ພິກຂຸ, ພິກສຸ ກໍວ່າ ແລະແປວ່າ ຜູ້ຂໍ).

ຄູບາ ມີສອງຄຳປະສົມກັນຄື ຄູ ກັບ ບາ. ບາ ເປັນຄຳສັບລາວ ແລະໝາຍເຖິງເພດຊາຍ ດັ່ງວ່າ ບາຄານທ້າວ ຊຶ່ງສາມຄຳນີ້ ໝາຍເຖິງຜູ້ຊາຍໝົດທັງສາມ. ຄົນມົງໂກນ, ຄົນວຽດ, ເທີກກີ, ຄົນອີຣານ ກໍໃຊ້ຄຳສັບ ຄານ ດັ່ງດຽວກັນກັບຄົນລາວ ແລະມີຄວາມໝາຍອັນດຽວກັນອີກດ້ວຍ (ບາຈຽງ ເດ໊ຊົ້ນ!). ຄູ ໃນຄວາມລາວໝາຍເຖິງ ຄັນຄູ, ຄູນ້ຳ, ຄູຄັນນາ. ຄູ ໃນຄຳຄູບາ ນີ້ເພິ່ນຫຍໍ້ມາຈາກຄຳບາລີ ຄຸຣຸ/Gourou/Guru, ປ່ຽນມາເປັນ ຄຣູ ກັບ ຄູ ອັນໝາຍເຖິງ ນາຍ+ຄຣູ/ຄຣູ+ບາ.

ພຣະພຸທເຈົ້າ, ຜູ້ຮູ້ຊອບດ້ວຍຕົນເອງ, ເປັນຜູ້ແຕ່ງຕັ້ງພຣະທັມ ຂຶ້ນມາອັນມີ ພຣະສົງ ເປັນຜູ້ປະຕິບັດ ພາຍໃຕ້ວິນັຍບັນຍັດ. ຄນະສົງ ເຖຣະວາດ, ຫິນະຍານ, ໄດ້ບັນຍັດກົດຣະບຽບໄວ້ເປັນສິນ ໒໒໗ ສຳລັບ ຄຣູບາ ແລະສິນ ໓໑໑ ສຳລັບຜູ້ຍິງທີ່ບວດເປັນພຣະ (ພິກຂຸນີປາຕິໂມກຂ໌). ບໍ່ຮູ້ວ່າ ທາງການລາວໄດ້ລົບລ້າງສັງຄະສຳລັບຜູ້ຍິງ ມາຕັ້ງແຕ່ປີໃດ. ດັ່ງນັ້ນ ເຮົາຈິ່ງບໍ່ເຫັນຜູ້ຍິງບວດເປັນພຣະສົງ ຢູ່ໃນລາວ, ເຫັນແຕ່ແມ່ຂາວ ຜູ້ຖືສິນ ໑໐ ເໝືອນດັ່ງດຽວກັນກັບຈົວ, ຜູ້ຍັງບໍ່ສາມາດບວດເປັນພຣະໄດ້ເທື່ອ. ຄຳສັບລາວທີ່ບົ່ງບອກວ່າ ຜູ້ຍິງເປັນພຣະສົງນັ້ນ ອາດຈະຫາຍໄປຫຼັງຈາກ ການລົບລ້າງຄນະສົງຜູ້ຍິງ, ພິກຂຸນີ, ອອກຈາກສັງຄະລາວ ຫຼືວ່າຄຳດັ່ງກ່າວນີ້ ອາດຈະບໍ່ເຄີຍມີມາກ່ອນກໍເປັນໄດ້ໃນຄວາມລາວ (ຄູນີ, ຄູນັງ, ຄູນາງ ເໝືອນ ນາງຄານ!).

ອຸບາສົກ ແມ່ນພວກຜູ້ຊາຍທີ່ຄ້ຳຊູສັງຄະ, ຄ້ຳຊູພຣະສົງໃນວັດ, ເໝືອນດັ່ງດຽວກັນກັບ ອຸບາສິກາ ອັນໝາຍເຖິງພວກຜູ້ຍິງທີ່ຄ້ຳຊູສັງຄະ. ອຸບາສົກ ກັບ ອຸບາສິກາ ຖືສິນ ໘ ແລະຈຳສິນນ້ອຍ, ມື້ ໗ ກັບ ໘ ຄ່ຳ, ພ້ອມທັງສິນໃຫຍ່, ມື້ ໑໔ ແລະ ໑໕ ຄ່ຳ, ໝາຍຄວາມວ່າ ພະຍາຍາມປະຕິບັດຕາມທີ່ບົ່ງໄວ້ໃນສິນແປດ. ສີ່ມື້ນີ້ ເປັນມື້ສຳຄັນ ສຳລັບພວກນີ້.

ສຳລັບຜູ້ມີຄວາມເຫຼື້ອມໃສ ໃນ ພຣະທັມ, ໝາຍຄວາມວ່າ ໃນ ພຣະພຸທສາສນາ, ຂອງ ອົງສັມມາສັມພຸທເຈົ້າ ນັ້ນເພິ່ນກໍສເນີສິນຫ້າໄວ້ ເປັນຫຼັກ. ເຮົາເອີ້ນຄົນຈຳພວກນີ້ວ່າ

# Cordillère annamitique et Droit de savoir ?

ຜູ້ມັບຖືພຸທສາສນາ. ຊາວຜິວຂາວທີ່ເປັນກາໂຕລິກ, ຫລາຍໆ ຄົນນິຍົມປະຕິບັດຕາມພຸທສາສນາ, ຄົນພວກນີ້ ກໍຍັງຄົງ ເປັນກາໂຕລິກເໝືອນເດີມ; ໝາຍຄວາມວ່າ ພວກເຂົາ ບໍ່ ໄດ້ເຊີເປັນກາໂຕລິກ ແລະກໍຍັງດຳເນີນໄປໂບດຕາມເດີມ (ຄົນລາວກາໂຕລິກຮຽກເຂົາເຈົ້າເອງວ່າກິຕັງ). ຖ້າເຮົາເວົ້າວ່າ ຄົນຈຳພວກນີ້ເປັນຄົນພຸດ ໝາຍຄວາມວ່າ ເຮົາໃຊ້ຄຳສັບທີ່ ບໍ່ສອດຄ່ອງກັບຄວາມເຂົ້າໃຈໃນຄຳສອນຂອງພຣະພຸທເຈົ້າ, ເພາະວ່າ ໑-ຄຳສັບ ພຸດ ມາຈາກຄຳເຄົ້າ ພຸທທ໌/Bouddha. ໒-ໃນຄຳສອນຂອງ ພຣະພຸທທ໌ ຈະບໍ່ມີຂໍ້ບັງຄັບໃດໆ ທັງ ສິ້ນ, ມີພຽງແຕ່ຂໍ້ ຣະບຽບສັງຄະ ທີ່ບັນຍັດໄວ້ເພື່ອງົດເວັ້ນ ການລ່ວງເກີນສິດທິຊຶ່ງກັນແລະກັນ ຣະຫວ່າງພຣະສົງ ຫຼື ຄຣູບາ ພາຍໃນສະຖາບັນ ແຫ່ງສັງຄະນັ້ນ. ໓-ບໍ່ມີການບັງ ຄັບ. ໝາຍຄວາມວ່າ ພຸທບໍຣິສັດທັງຫລາຍບໍ່ໄດ້ໄປຂົນຂວາຍ ໃຫ້ຜູ້ອື່ນມາເຂົ້າວັດແຫ່ງພຸທທ໌, ບໍ່ໄດ້ບັງຄັບໃຫ້ ມານົບ ມາຂາບ ມາໄຫວ້. ຕົວຢ່າງ ບໍ່ບັງຄັບຜູ້ອື່ນເຮັດແນວນັ້ນ ແນວນີ້ ໃນໂບດແຫ່ງ Religion ຂອງຕົນ ຈິ່ງມີສິດ ແຕ່ງ-ງານ ກັບລູກຂອງຕົນໄດ້, ຄືບັງຄັບຜູ້ອື່ນ Convertir ເຂົ້າ "ນິກາຍ" ຂອງຕົນທາງອ້ອມ ດັ່ງທີ່ເຮົາເຫັນກັນມາຢູ່ຕລອດ ໃນ Religion ອິສລາມ ແລະໃນ Religion ທີ່ຖືພຣະເຍຊູເຈົ້າ ເປັນໃຫຍ່. ໔-ສິນຫ້າເປັນພຽງຂໍ້ສເນີ ໃຫ້ຜູ້ສົນໃຈ ສາມາດ ປະຕິບັດໄດ້ ເພື່ອນຳໄປແກ້ໄຂບັນຫາ ແລະ ເພື່ອໃຫ້ມີ ຄວາມສງົບຈິດສງົບໃຈພຽງສ່ວນຕົວຜູ້ກ່ຽວ. ສິນຫ້າບໍ່ແມ່ນ ຂໍ້ບັງຄັບຫຼືຂໍ້ຫ້າມໃດໆ ແຕ່ຖ້າເຮົາເວົ້າວ່າ ສິນຫ້າ ເປັນຂໍ້ສເນີ (Proposition) ອາດຈະດີແລະເໝາະສົມກວ່າ. ອີກປະການ ນຶ່ງ ເວຣະມະນີ ແປວ່າ ງົດເວັ້ນ ຫຼື ເວັ້ນຈາກ/S'abstenir.

ສລຸບແລ້ວ, ຖ້າເຮົາເວົ້າວ່າ ຄົນທີ່ໄປວັດ ແລະໄປຂາບໄປ ໄຫວ້ ຫຼືໄປຄ້ຳຊູ ພຸທສັງຄະ ຜູ້ນັ້ນຕ້ອງເປັນ Bouddhiste "ຄົນພຸດ" ອັນໝາຍຄວາມວ່າ ຄົນເປັນ Bouddhiste ເກືອບ ໝົດໂລກເລີຍ, ພ້ອມກະທັ້ງ ຄຸນພໍ່ ທີ່ໄປບວດ ເປັນພຣະ ຕາມວັດວາອາຣາມຕ່າງໆ (ບໍ່ແມ່ນຈຸດປະສົງແນວດຽວກັນ). ຄຳເວົ້າ ແບບນີ້ ມາຈາກພວກຈຳກັດຢູ່ໃນ Religion monothéiste ດັ່ງ Le christianisme ກັບ L'islam. ສ່ວນພວກທີ່ບໍ່ເຂົ້າໃຈ ທາດແທ້ຂອງ Religion ກໍຖືວ່າ Religion ນັ້ນເປັນສາສນາ ໄປໝົດເໝືອນກັນ. ເຖິງຢ່າງໃດກໍດີ ຜູ້ຄວນ ຮ້ອງວ່າເປັນ Bouddhiste ແທ້ນັ້ນກໍຄືພິກຂຸຫຼືຄຣູບາ ນັ້ນເອງ ເພາະວ່າ, ໃນເຖຣະວາດ, ກ່ອນຈະຕັດກິເລດໄດ້ຕ້ອງເຂົ້າອາສັຍສັງຄະ ຄືເຂົ້າບວດເປັນຄຣູບາ. ອີງຕາມຫຼັກດັ່ງກ່າວນີ້ ທ່ານສາມາດ ປະຣິມານຈຳນວນຄົນທີ່ເປັນ Bouddhiste ວ່າມີໜ້ອຍຫຼືມີ ຫລາຍປານໃດ, ໃຫ້ທ່ານຄິດເອົາເອງ (ຈົບບັ້ນຕົ້ນ).

ສູຕິ — ຄວາມຮູ້ທົ່ວໄປ, ນຶ່ງພາຍໃນ ໑໗ ຂແນງແຫ່ງສິລປະສາດບູຮານ.

ຄຣູບາ — (ຮ້ອງໄດ້ຫລາຍຢ່າງດັ່ງ ພຣະ, ພຣະສົງ, ພິກຂຸ, ພິກສຸ, ອາຈານ). ພຣະ ໝາຍເຖິງ ສິ່ງຫຼືຜູ້ປະເສີດ. ພຣະສົງ ຄືຄຣູບາ ຜູ້ຢູ່ໃນ ໂອວາດ ແຫ່ງສັງຄະແລະຜູ້ຍັງສຶກສາພຣະທັມ/ທັມມະ. ພິກຂຸ ເປັນ ຄຳບາລີ, ສັນສະກຣິດວ່າ ພິກສຸ, ໃຊ້ແທນຄຳ ຄຣູບາຫຼືຄູບາ. ຄຳສັບເຫຼົ່ານີ້, ຈະເປັນຄຳໃດກໍຕາມ, ຊົ້ບອກແລະເນັ້ນໜັກໃສ່ ຜູ້ຍັງບວດເປັນ ພຣະ ຫຼືເປັນ ພິກຂຸ.

ຈົວ — (ສາມະເນນ ຫຼື ເນນ. ບາລີວ່າ ສາມະເນຣະ(-ຣີ)/Samanera(ri) ແປວ່າຜູ້ສງົບ). ຈົວແມ່ນຜູ້ນຸ່ງຜ້າເຫຼືອງຢູ່ໃນວັດ ແຕ່ຍັງ ບໍ່ມີ ສິດ ຫຼື ບໍ່ມີສິດຈັກດີ້ ບວດເປັນ ພຣະ ໄດ້ (ຄຳຮາກເຄົ້າ?).

ອາຈານ — ມາຈາກ ບາລີ ອາຈະຣິຍະ/Acariya, ແປວ່າ ຄຣູ/ຜູ້ສອນ. ພິກຂຸ ມີ ໜ້າທີ່ສຶກສາແລະປະຕິບັດຕາມທັມມະ. ໃນເມື່ອເຂົ້າໃຈແລ້ວ ເພິ່ນຈິ່ງຖ່າຍທອດໃນສິ່ງທີ່ເພິ່ນຮູ້ຮຽນມາ, ສອນຫຼືສິດສອນ, ໃຫ້ຜູ້ອື່ນ. ດ້ວຍການປຽບທຽບເພິ່ນໃສ່ກັບອາຈານ ທີ່ເປັນຄຣູ ສອນ ຕາມໂຮງຮຽນຕ່າງໆ, ພວກເຮົາຈິ່ງເອີ້ນເພິ່ນວ່າອາຈານ.

ເອກສານ


໑-ວັຈນານຸກົມລາວແປລາວ, ກະຊວງສຶກສາທິການ. ໒-ສາຣານຸກຣົມ ພາສາ ອີສານ-ໄທຍ-ອັງກິດ, ປຣີຊາ ພິນທອງ. ໓-ພົຈນານຸກຣົມ ລ້ານ ນາ-ໄທຍ ສບັບແມ່ຟ້າຫຼວງ. ໔-ຫລັກການສອນ ພຣະທັມມະກະຖຶກ, ສະພາພຣະທັມມະກະຖຶກ, ປີທີ໑, ແຂວງວຽງຈັນ. ໕- www.buddhanet.net


ຢາກຮັບສານນີ້ ຫຼື ຕິຊົມແນວໃດ, ສົ່ງສານໄປຫາ ດາບລາວ@yahoo.fr